# ບົດສະເໜີ
# ສະພາບການຄຸ້ມຄອງອົງການຈັດຕັ້ງສັງຄົມໃນ ສ ປປ ລາວ

ນຳສະເໜີໂດຍ: ວຽງສອນ ເລືອງຄຳສິງ ຮອງຫົວໜ້າພະແນກຄຸ້ມຄອງອົງການຈັດຕັ້ງສັງຄົມ,
ກົມພັດທະນາການບໍລິຫານລັດ, ກະຊວງພາຍໃນ

# ເນື້ອໃນລວມຂອງການນຳສະເໜີ

- ດ້ານນິຕິກຳ
- ການຈັດຕັ້ງປະຕິບັດວຽກງານອົງການຈັດຕັ້ງສັງຄົມໄລຍະຜ່ານມາ
- ສະພາບພົ້ນເດັ່ນໃນການເຄື່ອນໄຫວຂອງອົງການຈັດຕັ້ງສັງຄົມ
- ດ້ານດີ, ດ້ານອ່ອນ ແລະ ສິ່ງທ້າທາຍ

# I. ນິຕິກຳກ່ຽວກັບວຽກງານຄຸ້ມຄອງອີງການຈັດຕັ້ງສັງຄົມ

1) ດຳລັດວ່າດ້ວຍມູນນິທິ ເລກທີ 149/ນຍ, ລົງວັນທີ 19 ພຶດສະພາ 2011;
2) ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດດຳລັດວ່າດ້ວຍມູນນິທິ ເລກທີ 02/ພນ, ລົງວັນທີ 27 ເມສາ 2012;
3) ດຳລັດວ່າດ້ວຍ ສະມາຄົມ ເລກທີ 238/ລບ, ລົງວັນທີ 11 ສິງຫາ 2017;
4) ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດດຳລັດ ເລກທີ 05/ພນ, ລົງວັນທີ 11 ຕຸລາ 2017;

# I. ນິຕິກຳກ່ຽວກັບວຽກງານຄຸ້ມຄອງອົງການຈັດຕັ້ງສັງຄົມ

5) ແຈ້ງການ ເລກທີ 02/ພນ, ລົງວັນທີ 12 ມັງກອນ 2018 ໂດຍມີເນື້ອໃນຕົ້ນຕໍແມ່ນໃຫ້ສະມາຄົມທີ່ໄດ້ຮັບການອະນຸມັດສ້າງຕັ້ງຕາມດຳລັດວ່າດ້ວຍສະມາຄົມ ເລກທີ 115/ນຍ ສະເໜີຈົດທະບຽນ ຕາມດຳລັດວ່າ ດ້ວຍສະມາຄົມ 238/ລບ;

6) ຂໍ້ແນະນຳ ເລກທີ 4289/ຕປທ.ຈສກ, ລົງວັນທີ 22 ມິຖຸນາ 2018 ກ່ຽວກັບການຈັດຕັ້ງປະຕິບັດ ມາດຕາ 55 ວັກສອງ ຂອງດຳລັດວ່າດ້ວຍສະມາຄົມ ກ່ຽວກັບການອະນຸມັດໃຫ້ສະມາຄົມ ແລະ ມູນນິທິ ຮັບເອົາທຶນ, ຊັບສິນ ແລະ ຊ່ຽວຊານຈາກຕ່າງປະເທດ;

- ພ້ອມນີ້, ກໍ່ໄດ້ມີການສ້າງ ແລະ ປັບປຸງຮ່າງແບບຟອມສຳລັບວຽກງານສະມາຄົມ ແລະ ມູນນິທິ; ພ້ອມທັງປື້ມຄູ່ມືການປະຕິບັດວຽກງານສະມາຄົມ ເພື່ອອຳນວຍຄວາມສະດວກໃຫ້ແກ່ພາກປະຊາຊົນ ແລະ ອົງການຈັດຕັ້ງລັດ.

# II. ການຈັດຕັ້ງປະຕິບັດວຽກງານອົງການຈັດຕັ້ງສັງຄົມໃນໄລຍະຜ່ານມາ

1. **ການມອບໂອນສະມາຄົມ ໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ**
   - 39 ສະມາຄົມເຄື່ອນໄຫວໃນຂອບເຂດທົ່ວປະເທດ (ໃນຂັ້ນຕອນລິເລີ່ມ 24 ພາກສ່ວນ, ຮັບຮອງຄະນະຂົນຂວາຍ 05 ພາກສ່ວນ ແລະ ອະນຸມັດສ້າງຕັ້ງເປັນທາງການ 10 ພາກສ່ວນ) ແລະ 76 ສະມາຄົມເຄື່ອນໄຫວໃນຂອບເຂດແຂວງ (ເປັນສະມາຄົມທີ່ອະນຸມັດສ້າງຕັ້ງເປັນທາງການແລ້ວ);
2. **ການເຜີຍແຜ່-ສ້າງຄວາມເຂົ້າໃຈກ່ຽວກັບນິຕິກຳຂອງວຽກງານອົງການຈັດຕັ້ງສັງຄົມ**
   - ໄດ້ຈັດການເຜີຍແຜ່ ແລະ ຝຶກອົບຮົມກ່ຽວກັບການອະນຸມັດສ້າງຕັ້ງສະມາຄົມ ໃຫ້ບັນດາພະແນກການຂັ້ນແຂວງ ແລະ ບັນດາກະຊວງ, ອົງການລັດທຽບເທົ່າກະຊວງໃນຂອບເຂດທົ່ວປະເທດ;
   - ກະກຽມແຜນເຜີຍແຜ່ສະເພາະກ່ຽວກັບດຳລັດ 238/ລບ ແລະ ນິຕິກຳກ່ຽວຂ້ອງຮ່ວມກັບບັນດາກະຊວງ, ອົງການລັດທຽບເທົ່າກະຊວງ.

# II. ການຈັດຕັ້ງປະຕິບັດວຽກງານອົງການຈັດຕັ້ງສັງຄົມໃນໄລຍະຜ່ານມາ (ຕໍ່)

3. **ສະຖິຕິສະມາຄົມ**
   - ສະມາຄົມເຄື່ອນໄຫວຂອບເຂດທົ່ວປະເທດ ຈຳນວນ 75 ສະມາຄົມ;
   - ສະມາຄົມເຄື່ອນໄຫວຂອບເຂດແຂວງ, ນະຄອນຫຼວງ ຈຳນວນ 115 ສະມາຄົມ;
   - **ລວມທັງໝົດ: 190 ສະມາຄົມ.**
4. **ສະຖິຕິມູນນິທິ**
   - ມູນນິທິເຄື່ອນໄຫວຂອບເຂດທົ່ວປະເທດ ຈຳນວນ 31 ມູນນິທິ;
   - ມູນນິທິເຄື່ອນໄຫວຂອບເຂດແຂວງ, ນະຄອນຫຼວງ ຈຳນວນ 06 ມູນນິທິ;
   - **ລວມທັງໝົດ: 37 ມູນນິທິ.**

# III. ສະພາບພົ້ນເດັ່ນໃນການເຄື່ອນໄຫວຂອງອົງການຈັດຕັ້ງສັງຄົມໃນຂອບເຂດທົ່ວປະເທດ

## 1. ການປະກອບສ່ວນຊ່ວຍເຫຼືອສັງຄົມ ແລະ ການຈັດຕັ້ງປະຕິບັດໂຄງການ

- ສະມາຄົມ ແລະ ມູນນິທິ ໄດ້ປະກອບສ່ວນໃນຂົງເຂດວຽກງານຕ່າງໆ ເຊັ່ນ: ສຶກສາ, ສາທາ, ສິ່ງແວດລ້ອມ, ກະສິກຳ-ປ່າໄມ້, ແມ່ຍິງ, ເດັກນ້ອຍ, ຄົນພິການ ແລະ ອື່ນໆ. ນອກນີ້, ກໍຍັງມີການຊ່ວຍເຫຼືອດ້ານມະນຸດສະທຳ ເປັນຕົ້ນແມ່ນ ຜູ້ດ້ອຍໂອກາດ, ຜູ້ເຄາະຮ້າຍ ແລະ ຜູ້ປະສົບໄພພິບັດທາງທຳມະຊາດ;
- ໃນປີ 2018 ສະມາຄົມ ແລະ ມູນນິທິ ສາມາດລະດົມທຶນໄດ້ຈຳນວນປະມານ **31 ຕື້ກີບ ຫຼື 3,6 ລ້ານໂດລາ.**

# III. ສະພາບພົ້ນເດັ່ນໃນການເຄື່ອນໄຫວຂອງອົງການຈັດຕັ້ງສັງຄົມໃນຂອບເຂດທົ່ວປະເທດ (ຕໍ່)

## 2. ການປະກອບສ່ວນໃນການຮ່າງນະໂຍບາຍ

- ການປັບປຸງກົດໝາຍປ່າໄມ້;
- ການປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້;
- ສົນທິສັນຍາວ່າດ້ວຍຊີວະນາໆພັນ, ເສດຖະກິດ, ສັງຄົມ ແລະ ວັດທະນະທຳ;
- ສົນທິສັນຍາວ່າດ້ວຍສິດທິເດັກ;
- ດຳລັດກ່ຽວກັບສິດຂອງຄົນພິການ, ຊົນເຜົ່າ ແລະ ບົດບາດຍິງ-ຊາຍ;
- ການເຂົ້າຮ່ວມສົນທະນາ, ປຶກສາຫາລື, ແລກປ່ຽນບົດຮຽນໃນເວທີຕ່າງໆ ທັງພາຍໃນ ແລະ ພາກພື້ນ.

# IV. ດ້ານດີ, ດ້ານອ່ອນ ແລະ ສິ່ງທ້າທາຍກ່ຽວກັບ ວຽກງານອົງການຈັດຕັ້ງສັງຄົມ

## ❑ ດ້ານດີ

- **ສຳລັບພາກລັດ**

- ມີການແຕ່ງຕັ້ງ ຜູ້ຮັບຜິດຊອບວຽກງານອົງການຈັດຕັ້ງສັງຄົມຢູ່ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ;

- ມີການຈັດກອງປະຊຸມ ແລະ ຝຶກອົບຮົມຈຳນວນໜຶ່ງ ໃຫ້ແກ່ຜູ້ຮັບຜິດຊອບວຽກງານດັ່ງກ່າວນີ້ ໃນການຈັດຕັ້ງປະຕິບັດດຳລັດ;

- ຫຼາຍພາກສ່ວນມີຄວາມກະຕືລືລົ້ນໃນການຈັດຕັ້ງ ປະຕິບັດດຳລັດ ແລະ ເຜີຍແຜ່ກ່ຽວກັບວຽກງານດັ່ງກ່າວພາຍໃນຂະແໜງການຂອງຕົນ;

- ສາມາດສັງລວມສະພາບການຈັດຕັ້ງ, ການເຄື່ອນໄຫວຊ່ວຍເຫຼືອສັງຄົມ, ການຮ່ວມມືກັບຕ່າງປະເທດ ແລະ ການຊອກຫາແຫຼ່ງທຶນ ຂອງອົງການຈັດຕັ້ງສັງຄົມລາວ;

- ມີການລົງຕິດຕາມຊຸກຍູ້ຂອງອົງການຈັດຕັ້ງລັດ ແລະ ການເຄື່ອນໄຫວຂອງສະມາຄົມ, ມູນນິທິ ເພື່ອໃຫ້ມີການປັບປຸງດີຂຶ້ນ.

- **ສໍາລັບອົງການຈັດຕັ້ງສັງຄົມ**

- ຫຼາຍສະມາຄົມ ແລະ ມູນນິທິ ມີການເຄື່ອນໄຫວຢ່າງມີແບບແຜນ ແລະ ການປະຕິບັດກິດຈະກໍາ ບົນພື້ນຖານແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນຍຸດທະສາດຂອງ ຂະແໜງການລັດທີ່ກ່ຽວຂ້ອງ ໂດຍປະກອບສ່ວນຢ່າງຕັ້ງໜ້າ ໃນການຊ່ວຍເຫຼືອສັງຄົມ, ຊຸມຊົນ, ປະຊາຊົນຜູ້ດ້ອຍໂອກາດ, ທຸກຍາກ ແລະ ອົງການຈັດຕັ້ງລັດໃນດ້ານຕ່າງໆ;

- ມີການຈັດກອງປະຊຸມແລກປ່ຽນວິຊາການ ເພື່ອຖອດຖອນບົດຮຽນ ໃນດ້ານຕ່າງໆ ເຊິ່ງເປັນດ້ານຕັ້ງໜ້າໃຫ້ແກ່ການເຄື່ອນໄຫວທີ່ມີປະສິດທິພາບ ແລະ ປະສິດທິຜົນ ຂອງສະມາຄົມ ແລະ ມູນນິທິ;

- ສະມາຄົມ ແລະ ມູນນິທິຈໍານວນໜຶ່ງ ມີລະບົບການບໍລິຫານພະນັກງານ, ໂຄງການ ແລະ ການເງິນທີ່ດີ;

- ໄດ້ຮັບການສະໜັບສະໜູນຈາກໜ່ວຍງານລັດ, ອົງການຈັດຕັ້ງ ມະຫາຊົນ, ອົງການຈັດຕັ້ງບໍ່ສັງກັດລັດຖະບານ, ອົງການສະຫະປະຊາຊາດ, ອົງການຈັດຕັ້ງສັງຄົມ ແລະ ອົງການໃຫ້ທຶນອື່ນໆຂອງສາກົນ.

- **ສຳລັບອົງການຈັດຕັ້ງສັງຄົມ (ຕໍ່)**

- ສະມາຄົມ ແລະ ມູນນິທິ ມີຄວາມເອົາໃຈໃສ່ໃນການ ສົ່ງບົດລາຍງານທັນຕາມກຳນົດ ແລະ ປະຕິບັດລະບຽບການອື່ນໆ;

- ຫຼາຍສະມາຄົມ, ມູນນິທິ ມີຄວາມເອົາໃຈໃສ່ເຄື່ອນໄຫວພາຍໃຕ້ລະບຽບການຂອງລັດ, ກົດໝາຍ ແລະ ກົດລະບຽບຂອງຕົນ;

- ໃຫ້ຄວາມຮ່ວມມື, ປະສານສົມທົບກັບອົງການທີ່ເຮັດບົດບາດຄຸ້ມຄອງ ແລະ ພາກສ່ວນ ທີ່ກ່ຽວຂ້ອງໃນການເຄື່ອນໄຫວຂອງຕົນ;

- ມີຄວາມເຂົ້າໃຈຕໍ່ບົດບາດ, ໜ້າທີ່ຂອງຕົນຫຼາຍຂຶ້ນ ໃນຖານະເປັນອົງການບໍ່ຫວັງຜົນກຳໄລ ແລະ ໃຫ້ການຊ່ວຍເຫຼືອສັງຄົມ.

# ❑ ດ້ານອ່ອນ-ສິ່ງທ້າທາຍ

- **ສໍາລັບພາກລັດ**

  - ຄວາມຫຍຸ້ງຍາກໄລຍະຂ້າມຜ່ານມາສູ່ດໍາລັດສະມາຄົມ ສະບັບປັບປຸງໃໝ່ ເຊິ່ງສະແດງອອກຄື: ຫຼາຍພາກສ່ວນ ຍັງບໍ່ທັນເຂົ້າໃຈແຈ້ງຕໍ່ກັບພາລະບົດບາດ ແລະ ໜ້າທີ່ຂອງຕົນຕາມດໍາລັດກໍານົດ ເນື່ອງຈາກເປັນສິ່ງໃໝ່, ບໍ່ທັນມີບົດຮຽນ ແລະ ປະສົບການ ໂດຍສະເພາະຂັ້ນຕອນການອະນຸມັດສ້າງຕັ້ງ, ການປະສານງານຂັ້ນສູນກາງ ແລະ ທ້ອງຖິ່ນ; ການເຜີຍແຜ່ນິຕິກໍາກ່ຽວກັບການຈັດຕັ້ງປະຕິບັດ ຍັງບໍ່ທັນເຮັດໄດ້ຢ່າງກວ້າງຂວາງເລິກເຊິ່ງ;
  - ບາງກະຊວງ ຍັງຖືເບົາຕໍ່ກັບວຽກງານອົງການຈັດຕັ້ງສັງຄົມ ສະແດງອອກຄື: ການຄົ້ນຄວ້າມີຄໍາເຫັນຕໍ່ການອະນຸມັດສ້າງຕັ້ງ ແລະ ຍັງບໍ່ແຕ່ງຕັ້ງຄະນະຮັບຜິດຊອບວຽກຄຸ້ມຄອງອົງການຈັດຕັ້ງສັງຄົມຕົນ;
  - ການຄົ້ນຄວ້າມີຄໍາເຫັນຕໍ່ການຮັບທຶນບາງກໍລະນີ ຍັງມີລັກສະນະຊັກຊ້າ ພາໃຫ້ບາງໂຄງການຂອງສະມາຄົມ ບໍ່ໄດ້ຮັບທຶນ ຫຼື ມີເວລາໜ້ອຍໃນການຈັດຕັ້ງປະຕິບັດ.

- **ສຳລັບອົງການຈັດຕັ້ງສັງຄົມ**

 - ສະມາຄົມ ແລະ ມູນນິທິ ຈຳນວນໜຶ່ງ ຍັງຖືເບົາໃນການສົ່ງບົດລາຍງານ ຫຼື ການສະເໜີຈົດທະບຽນ;

 - ບາງອົງການຈັດຕັ້ງສັງຄົມ ຍັງບໍ່ເຂົ້າໃຈແຈ້ງຕໍ່ລະບຽບການຂອງລັດ ເຊັ່ນ: ການນຳໃຊ້ສີນ້ຳມຶກໃນການຈ້ຳຕາປະທັບ, ມີການຂັດແຍ້ງດ້ານຜົນປະໂຫຍດພາຍໃນ ແລະ ອື່ນໆ;

 - ບາງສະມາຄົມ ມີຄວາມຫຍຸ້ງຍາກໃນການປະສານງານ ຂອງພະນັກງານພາຍໃນຂອງຕົນ ຊຶ່ງເຮັດໃຫ້ ການສະຫຼຸບ-ລາຍງານ ບໍ່ທ່ອງທັນກັບເວລາ;

 - ການເສຍເງິນບຳລຸງຂອງສະມາຊິກສະມາຄົມ ຍັງບໍ່ເປັນຕາມກົດລະບຽບ;

 - ການປະຕິບັດພາລະບົດບາດ-ໜ້າທີ່ຂອງຄະນະບໍລິຫານ ກໍ່ຄືຄະນະກວດກາ ຍັງເຮັດບໍ່ໄດ້ດີ;

 - ການກວດກາຄືນການເປັນສະມາຊິກ, ການກວດກາພາຍໃນ ຍັງບໍ່ທັນປະຕິບັດເປັນປົກກະຕິ;

 - ຄວາມຂັດແຍ່ງພາຍໃນ ຂອງບາງສະມາຄົມ, ມູນນິທິ;

 - ສະມາຄົມ ແລະ ມູນນິທິ ຍັງມີລັກສະນະອາໃສທຶນສະໜັບສະໜູນ ຈາກອົງການຈັດຕັ້ງສາກົນ ແລະ ຕ່າງປະເທດເປັນຕົ້ນຕໍ ເຮັດໃຫ້ກິດຈະກຳ ແລະ ການເຄື່ອນໄຫວບາງດ້ານຂອງຕົນ ມີຂໍ້ຈຳກັດ.

# ຂໍຂອບໃຈ

# ສິນທະນາ
# ແລກປ່ຽນຄຳເຫັນ